ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ລັດຖະບານ

ເລກທີ..502../ລບ

ນະຄອນຫຼວງວຽງຈັນ, ວັນທີ..4..12..2012.

# ດຳລັດ

## ວ່າດ້ວຍການກວດກາການຄ້າ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005;
- ອີງຕາມກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມມະຕິກອງປະຊຸມລັດຖະບານ ສະບັບເລກທີ 10/ລບ, ລົງວັນທີ 09/10/2012;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2193/ອຄ, ລົງວັນທີ 16 ຕຸລາ 2012.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ ແລະມາດຕະການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ເພື່ອສ້າງສະຕິແລະປູກຈິດສຳນຶກໃນການເຄົາລົບລະບຽບກົດໝາຍ ພ້ອມທັງສະກັດກັ້ນການລະເມີດລະບຽບກົດໝາຍ ກ່ຽວກັບການຄຸ້ມຄອງການຄ້າ, ການດຳເນີນທຸລະກິດທີ່ບໍ່ມີໃບທະບຽນວິສາຫະກິດ ແລະການຄ້າສິນຄ້ານອກລະບົບ ແນໃສ່ສົ່ງເສີມ ແລະປົກປ້ອງ ຫົວໜ່ວຍທຸລະກິດການຄ້າ ທີ່ເຄື່ອນໄຫວຖືກຕ້ອງ, ສອດຄ່ອງກັບລະບຽບກົດໝາຍ ແລະເປັນໄປຕາມກົນໄກເສດຖະກິດຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ, ສົ່ງເສີມການຜະລິດສິນຄ້າ, ທັງເປັນການປະກອບສ່ວນເຂົ້າໃນວຽກງານການຄຸ້ມຄອງສິນຄ້າ, ລາຄາ ແລະປົກປ້ອງສິດຜົນປະໂຫຍດຂອງຜູ້ຊົມໃຊ້.

**ມາດຕາ 2. ການກວດກາການຄ້າ**

ການກວດກາການຄ້າແມ່ນການເຄື່ອນໄຫວຕ້ານ ແລະສະກັດກັ້ນການລະເມີດລະບຽບກົດໝາຍ ກ່ຽວກັບການຄຸ້ມຄອງການຄ້າ, ການດໍາເນີນທຸລະກິດທີ່ບໍ່ມີໃບທະບຽນວິສາຫະກິດ ແລະການຄ້າສິນຄ້ານອກລະບົບ.

**ມາດຕາ 3. ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນດໍາລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

- **ການຄ້າ** ໝາຍເຖິງ ການຊື້, ການຂາຍ, ການແລກປ່ຽນ, ການຈໍລະຈອນສິນຄ້າ;
- **ສິນຄ້າ** ໝາຍເຖິງ ວັດຖຸສິ່ງຂອງທີ່ຜະລິດ ຫຼືມີໄວ້ເພື່ອຂາຍ ລວມທັງເອກະສານສະແດງສິດໃນວັດຖຸສິ່ງຂອງນັ້ນ;
- **ການລະເມີດລະບຽບກົດໝາຍການຄຸ້ມຄອງການຄ້າ** ໝາຍເຖິງ ການລະເມີດລະບຽບກົດໝາຍ ກ່ຽວກັບການຈໍລະຈອນສິນຄ້າ, ການຄຸ້ມຄອງສິນຄ້າ, ລາຄາ, ຕະຫຼາດ, ການຫຸ້ມຕະຫຼາດ ແລະການກັກຕຸນສິນຄ້າ;
- **ການຄ້າສິນຄ້ານອກລະບົບ** ໝາຍເຖິງ ການຄ້າສິນຄ້າ ທີ່ລັດບໍ່ເກືອດຫ້າມ ແຕ່ດໍາເນີນການຄ້າ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ;
- **ການຍຶດສິນຄ້າ** ໝາຍເຖິງ ການຮັກສາສິນຄ້າໄວ້ຊົ່ວຄາວໃນສະຖານທີ່ ທີ່ກໍານົດໄວ້ສະເພາະ ພາຍໃຕ້ການຄວບຄຸມ, ດູແລຮັກສາຂອງບຸກຄົນ ຫຼືພາກສ່ວນທີ່ໄດ້ຮັບການມອບໝາຍ ເພື່ອລໍຖ້າຜົນຂອງການດໍາເນີນຄະດີ;
- **ການອາຍັດສິນຄ້າ** ໝາຍເຖິງ ການຫ້າມຊື້, ຂາຍ, ໂອນ ຫຼືຊວດຈໍາ ສິນຄ້າທີ່ບໍ່ສະດວກໃນການເຄື່ອນຍ້າຍ ໂດຍຮັກສາໄວ້ຢູ່ສະຖານທີ່ຂອງຜູ້ຖືກກວດກາ ເພື່ອລໍຖ້າຜົນຂອງການດໍາເນີນຄະດີ;
- **ການຮິບສິນຄ້າ** ໝາຍເຖິງ ການເອົາສິນຄ້າທັງໝົດ ຫຼືບາງສ່ວນ ທີ່ເປັນກໍາມະສິດຂອງຜູ້ກະທໍາຜິດມາເປັນຂອງລັດຕາມຄໍາຕັດສິນຂອງສານ;

**ມາດຕາ 4. ຂອບເຂດການນໍາໃຊ້ດໍາລັດ**

ດໍາລັດສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທັງພາຍໃນ ແລະຕ່າງປະເທດ ທີ່ເຄື່ອນໄຫວດໍາເນີນທຸລະກິດກ່ຽວກັບການຄ້າ ຢູ່ ສປປ ລາວ ລວມທັງພະນັກງານ ແລະເຈົ້າໜ້າທີ່ກວດກາການຄ້າ.

## ໝວດທີ 2
## ການດໍາເນີນການກວດກາການຄ້າ

**ມາດຕາ 5. ຂອບເຂດການກວດກາການຄ້າ**

ການກວດກາການຄ້າ ແມ່ນການກວດກາໃນ ສາມ ຂອບເຂດທີ່ເກີດຂຶ້ນພາຍໃນປະເທດ ດັ່ງນີ້ :

1. ການຄ້າສິນຄ້າ ແລະລາຄາ ທີ່ລະເມີດລະບຽບການຄຸ້ມຄອງການຄ້າ;
2. ການດຳເນີນທຸລະກິດ ທີ່ບໍ່ມີໃບທະບຽນວິສາຫະກິດ;
3. ການຄ້າສິນຄ້ານອກລະບົບ.

ການກວດກາການຄ້າ ແມ່ນການກວດກາບັນດາລາຍການ ດັ່ງນີ້:

- ການລະເມີດລະບຽບກົດໝາຍກ່ຽວກັບການຈໍລະຈອນສິນຄ້າ;
- ການຄຸ້ມຄອງສິນຄ້າ, ລາຄາ, ຕະຫຼາດ, ການທຸ່ມຕະຫຼາດ ແລະ ການກັກຕຸນສິນຄ້າ;
- ການບໍ່ຕິດປ້າຍລາຄາສິນຄ້າ, ບໍ່ຕິດສະຫຼາກສິນຄ້າ;
- ການນຳໃຊ້ເງິນຕາຕ່າງປະເທດຊຳລະສະສາງ ລວມທັງການຕິດປະກາດລາຄາສິນຄ້າ ແລະ ຄ່າບໍລິການເປັນເງິນຕາຕ່າງປະເທດໃນດິນແດນ ສປປ ລາວ ໂດຍທີ່ບໍ່ໄດ້ຮັບອະນຸຍາດ;
- ນຳເອົາສິນຄ້າທີ່ມີໄວ້ຢູ່ໃນຄັງແຮສຳຮອງອອກຈຳໜ່າຍໂດຍບໍ່ໄດ້ຮັບອະນຸຍາດ;
- ຢຸດ, ປະຕິເສດ ຫຼື ແກ່ຍາວເວລາການຈຳໜ່າຍ ຫຼື ການບໍລິການໂດຍບໍ່ມີເຫດຜົນ;
- ກັກຕຸນສິນຄ້າທີ່ນອນໃນລາຍການຄວບຄຸມລາຄາ;
- ການລັກໂລບການຊັ່ງຜອງ ຫຼື ວັດແທກ;
- ກວດກາສິນຄ້າທີ່ຜະລິດ, ນຳເຂົ້າ ແລະ ຈຳໜ່າຍໃນທ້ອງຕະຫຼາດທີ່ບໍ່ມີຄຸນ ນະພາບ, ບໍ່ໄດ້ມາດຕະຖານ, ສິນຄ້າປອມແປງ, ສິນຄ້າລອກຮຽນແບບ ແລະ ສິນຄ້າໝົດອາຍຸ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
- ການດຳເນີນທຸລະກິດໂດຍບໍ່ຂຶ້ນທະບຽນວິສາຫະກິດ;
- ການດຳເນີນທຸລະກິດໂດຍບໍ່ຖືກກັບວັດຖຸປະສົງ;
- ການບໍ່ຕິດປ້າຍ ຫຼືໃສ່ຊື່ວິສາຫະກິດບໍ່ຖືກຕ້ອງ;
- ການໃສ່ຊື່ທຸລະກິດທີ່ເກືອດຫ້າມ;
- ການບໍ່ປົດປ້າຍຊື່ວິສາຫະກິດ ພາຍຫຼັງຖືກຍຸບເລີກ;
- ການປອມແປງ, ປ່ຽນແປງ ຫຼື ຊື້-ຂາຍເອກະສານຕ່າງໆ ກ່ຽວກັບການຊື້ຂາຍສິນຄ້າ ເປັນຕົ້ນ: ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ໃບອະນຸຍາດນຳເຂົ້າ-ສົ່ງອອກສິນຄ້າ;
- ການຊື້-ຂາຍສິນຄ້າທີ່ລັກລອບ ຫຼື ຫຼົບຫຼີກ ລະບຽບການຄຸ້ມຄອງການຄ້າ ເປັນຕົ້ນ: ການລັກລອບນຳເຂົ້າ-ສົ່ງອອກສິນຄ້າ, ການຫຼົບຫຼີກພັນທະ ຫຼື ຄ່າທຳນຽມຕ່າງໆ ຫຼື ປະຕິບັດພັນທະ ຫຼື ຄ່າທຳນຽມບໍ່ເຕັມອັດຕາສ່ວນ;
- ລາຍການອື່ນທີ່ເປັນການລະເມີດກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງກັບການຄ້າ.

### ມາດຕາ 6. ຮູບການກວດກາການຄ້າ

ການກວດກາການຄ້າປະກອບດ້ວຍ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ;
2. ການກວດກາຕາມຄຳສັ່ງ;

3. ການກວດກາຕາມແຫຼ່ງຂ່າວ ຫຼືຕາມການສະເໜີ.

ການກວດກາຕາມປົກກະຕິ ແມ່ນການກວດກາການປະຕິບັດລະບຽບກົດໝາຍ ໃນສະຖານທີ່ຕ່າງໆ ເປັນຕົ້ນ ຫ້າງຮ້ານ, ຕະຫຼາດ, ສາງ ແລະສະຖານທີ່ອື່ນ ຊຶ່ງດຳເນີນໄປຕາມແຜນການທີ່ໄດ້ຮັບການຮັບຮອງ ຈາກ ອົງການທີ່ຮັບຜິດຊອບວຽກງານກວດກາການຄ້າແຕ່ລະຂັ້ນ.

ການກວດກາຕາມຄຳສັ່ງ ແມ່ນການກວດກາຕາມຂໍ້ຕົກລົງຂອງການຈັດຕັ້ງທີ່ກ່ຽວຂ້ອງ.

ການກວດກາຕາມແຫຼ່ງຂ່າວ ຫຼືຕາມການສະເໜີ ແມ່ນການກວດກາ ເມື່ອມີຂໍ້ມູນແຈ້ງບອກ ຫຼືການສະເໜີທີ່ເຊື່ອຖືໄດ້, ການກວດກາດັ່ງກ່າວ ສາມາດປະຕິບັດໄດ້ໃນທຸກສະຖານທີ່ ແລະທຸກເວລາ.

**ມາດຕາ 7. ການມອບໝາຍ ຫຼືການແຕ່ງຕັ້ງໃຫ້ດຳເນີນການກວດກາການຄ້າ**

ການດຳເນີນການກວດກາແຕ່ລະຄັ້ງ ຕ້ອງໄດ້ຮັບການມອບໝາຍ ຫຼືແຕ່ງຕັ້ງເປັນລາຍລັກອັກສອນຈາກຂັ້ນເທິງທີ່ກ່ຽວຂ້ອງ ເວັ້ນເສຍແຕ່ໃນກໍລະນີທີ່ຈຳເປັນຮີບດ່ວນ.

ການມອບໝາຍ ຫຼືການແຕ່ງຕັ້ງ ໃຫ້ດຳເນີນການກວດກາໃນແຕ່ລະຄັ້ງ ຕ້ອງປະກອບມີຜູ້ກວດກາຢ່າງໜ້ອຍ ສາມ ຄົນ ຂຶ້ນໄປ ແລະຕ້ອງມີເຈົ້າໜ້າທີ່ກວດກາການຄ້າ ທີ່ເປັນພະນັກງານກວດກາການຄ້າຢ່າງໜ້ອຍ ໜຶ່ງ ຄົນ.

**ມາດຕາ 8. ຜູ້ທີ່ມີສິດມອບໝາຍ ຫຼືແຕ່ງຕັ້ງໃຫ້ດຳເນີນການກວດກາການຄ້າ**

ຜູ້ທີ່ມີສິດມອບໝາຍ ຫຼືແຕ່ງຕັ້ງໃຫ້ດຳເນີນການກວດກາການຄ້າ ປະກອບດ້ວຍ:

- ລັດຖະມົນຕີວ່າການ ກະຊວງອຸດສະຫະກຳ ແລະການຄ້າ ຫຼືຫົວໜ້າກົມການຄ້າພາຍໃນ ສຳລັບການກວດກາການຄ້າຂັ້ນສູນກາງ;
- ຫົວໜ້າພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນ ຫຼືຫົວໜ້າຂະແໜງການຄ້າພາຍໃນ ສຳລັບການກວດກາການຄ້າຂັ້ນແຂວງ;
- ຫົວໜ້າຫ້ອງການອຸດສາຫະກຳ ແລະການຄ້າເມືອງ, ເທດສະບານ ສຳລັບການກວດກາການຄ້າຂັ້ນເມືອງ.

**ມາດຕາ 9. ຂັ້ນຕອນການດຳເນີນການກວດກາການຄ້າ**

ໃນການດຳເນີນການກວດກາແຕ່ລະຄັ້ງ ເຈົ້າໜ້າທີ່ກວດກາການຄ້າ ຕ້ອງປະຕິບັດໃຫ້ຖືກຕ້ອງ ຕາມຂັ້ນຕອນ ດັ່ງນີ້:

1. ສະເໜີຕົວ, ສະແດງບັດເຈົ້າໜ້າທີ່ກວດກາການຄ້າ ແລະຂໍ້ຕົກລົງ ກ່ຽວກັບການມອບໝາຍ ຫລືການແຕ່ງຕັ້ງ ໃຫ້ດຳເນີນການກວດກາການຄ້າ ຕໍ່ຜູ້ຖືກກວດກາ. ສຳລັບພະນັກງານກວດກາການຄ້າໃນເວລາດຳເນີນການກວດກາທຸກຄັ້ງ ຕ້ອງນຸ່ງເຄື່ອງແບບ;
2. ເອົາຄຳໃຫ້ການເບື້ອງຕົ້ນ;
3. ເກັບກຳຫຼັກຖານ ແລະຂອງກາງໃນການກະທຳຜິດ ພ້ອມທັງຂຶ້ນບັນຊີລະອຽດ;

4. ເຮັດບົດບັນທຶກກ່ຽວກັບການກວດກາລະຫວ່າງ ເຈົ້າໜ້າທີ່ກວດກາການຄ້າ ກັບຜູ້ຖືກກວດກາ ພ້ອມ ທັງຮັກສາຫຼັກຖານ ຫຼືຂອງກາງ ແລະເຮັດບົດລາຍງານໃຫ້ຜູ້ມອບໝາຍ ຫຼືຜູ້ແຕ່ງຕັ້ງຊາບ.

ໃນກໍລະນີທີ່ມີຄວາມຫຍຸ້ງຍາກໃນການກວດກາ, ເຈົ້າໜ້າທີ່ກວດກາການຄ້າ ຕ້ອງລາຍງານ ແລະ ຂໍທິດຊີ້ນຳຈາກຜູ້ທີ່ມີສິດມອບໝາຍ ຫຼືຜູ້ທີ່ແຕ່ງຕັ້ງໃຫ້ດຳເນີນການກວດກາການຄ້າ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂອງດຳລັດສະບັບນີ້.

## ມາດຕາ 10. ການສະແດງບັດກ່ອນການດຳເນີນການກວດກາ

ເພື່ອໃຫ້ເປົ້າໝາຍ ທີ່ຖືກກວດກາໄດ້ຮັບຊາບ ແລະໃຫ້ການຮ່ວມມື, ກ່ອນການດຳເນີນການກວດກາ ຕາມແຜນປົກກະຕິ, ຕາມແຫຼ່ງຂ່າວ ຫຼືຕາມການສະເໜີ, ຕາມຄຳສັ່ງຂອງຂັ້ນເທິງ ທີ່ບໍ່ຈຳເປັນຮີບດ່ວນແຕ່ລະ ຄັ້ງນັ້ນ ເຈົ້າໜ້າທີ່ກວດກາການຄ້າ ຕ້ອງສະແດງບັດເຈົ້າໜ້າທີ່ກວດກາການຄ້າ ແລະແຈ້ງຂໍ້ຕົກລົງກ່ຽວກັບການ ກວດກາດັ່ງກ່າວ ຕໍ່ຜູ້ຖືກກວດກາ.

ສຳລັບການກວດກາ ໃນກໍລະນີທີ່ຈຳເປັນຮີບດ່ວນນັ້ນ ແມ່ນໃຫ້ສະແດງແຕ່ບັດເຈົ້າໜ້າທີ່ກວດກາການ ຄ້າເທົ່ານັ້ນ ກໍມີສິດກວດກາໄດ້.

## ມາດຕາ 11. ການເອົາຄຳໃຫ້ການເບື້ອງຕົ້ນ

ພາຍຫຼັງທີ່ຍຶດ ຫຼືອາຍັດ ສິນຄ້າ, ເຄື່ອງຂອງ, ພາຫະນະ ແລະເອກະສານທີ່ກ່ຽວຂ້ອງກັບການກະທຳ ຜິດ ໃນທຸກຄັ້ງ ໃຫ້ເຈົ້າໜ້າທີ່ກວດກາການຄ້າເອົາຄຳໃຫ້ການເບື້ອງຕົ້ນ ປະກອບເປັນຂໍ້ມູນເຂົ້າໃນບົດບັນທຶກ ເພື່ອ ລາຍງານໃຫ້ຜູ້ທີ່ມີສິດມອບໝາຍ ຫຼືຜູ້ທີ່ແຕ່ງຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງດຳລັດສະບັບນີ້ ແລະ ອົງການທີ່ກ່ຽວຂ້ອງ.

## ມາດຕາ 12. ການຮັກສາຫຼັກຖານ ແລະຂອງກາງ

ສິນຄ້າ, ເຄື່ອງຂອງ ຫຼືພາຫະນະຂົນສົ່ງ ທີ່ຖືກຍຶດ ຫຼືອາຍັດເປັນຂອງກາງນັ້ນ ໃຫ້ເຈົ້າໜ້າທີ່ກວດກາການ ຄ້າ ຫຼືບຸກຄົນ ຫຼືພາກສ່ວນທີ່ໄດ້ຮັບມອບໝາຍເປັນຜູ້ປົກປັກຮັກສາ ຊຶ່ງຕ້ອງຮັບປະກັນບໍ່ໃຫ້ຕົກເຮຍເສັຍຫາຍ ແລະຫ້າມບໍ່ໃຫ້ສັບປ່ຽນ ຫຼືຍັກຍອກເອົາຂອງກາງດັ່ງກ່າວ.

ສຳລັບສິນຄ້າ, ເຄື່ອງຂອງທີ່ປ່ຽນສະພາບ ຫຼືເສັຍຄຸນນະພາບໄວ ຫຼືບໍ່ເໝາະສົມໃນການຮັກສາໄວ້ນັ້ນ ອົງການປະຕິບັດວຽກງານກວດກາການຄ້າທີ່ກ່ຽວຂ້ອງ ມີສິດນຳອອກປະມູນຂາຍ ແລະເກັບຮັກສາເງິນທີ່ຂາຍ ໄດ້ນັ້ນໄວ້ຈົນກວ່າການດຳເນີນການແກ້ໄຂສິ້ນສຸດ.

## ມາດຕາ 13. ການເຮັດບົດບັນທຶກ

ການດຳເນີນການກວດກາ ແລະການເອົາຄຳໃຫ້ການເບື້ອງຕົ້ນໃນແຕ່ລະຄັ້ງ, ເຈົ້າໜ້າທີ່ກວດກາການຄ້າ ຕ້ອງເຮັດບົດບັນທຶກການກວດກາ ຫລືການເອົາຄຳໃຫ້ການເບື້ອງຕົ້ນ ໂດຍຊ້ອງໜ້າຜູ້ຖືກກວດກາ ແລະມອບໃຫ້ ຜູ້ຖືກກວດກາອ່ານ; ໃນກໍລະນີທີ່ຜູ້ຖືກກວດກາບໍ່ສາມາດອ່ານໄດ້ ແມ່ນໃຫ້ບຸກຄົນທີສາມອ່ານໃຫ້ຟັງ ແລ້ວໃຫ້ຜູ້

ຖືກກວດກາລົງລາຍເຊັນ ແລະຂຽນຊື່ຂອງຕົນ ຫຼືແປະໂປ້ມືໃສ່ບົດບັນທຶກນັ້ນ, ຫຼັງຈາກນັ້ນ ເຈົ້າໜ້າທີ່ກວດກາການຄ້າ ທີ່ຮັບຜິດຊອບເຮັດບົດບັນທຶກ ຫຼືເອົາຄຳໃຫ້ການເບື້ອງຕົ້ນ ຈຶ່ງລົງລາຍເຊັນ ແລະຂຽນຊື່ຂອງຕົນເປັນຜູ້ສຸດທ້າຍ.

ໃນກໍລະນີຜູ້ຖືກກວດກາບໍ່ຍອມລົງລາຍເຊັນ ແລະຂຽນຊື່ຕົນເອງ ຫຼືແປະໂປ້ໃສ່ບົດບັນທຶກ ກໍໃຫ້ໝາຍເຫດໄວ້ໃນຕອນທ້າຍຂອງບົດບັນທຶກ. ບົດບັນທຶກການກວດກາ ຫລືການເອົາຄຳໃຫ້ການເບື້ອງຕົ້ນນັ້ນ ຕ້ອງເຮັດເປັນ ສາມ ສະບັບ, ໜຶ່ງສະບັບ ເກັບໄວ້ໃນສຳນວນຄະດີ, ໜຶ່ງສະບັບ ມອບໃຫ້ຜູ້ຖືກກວດກາ ແລະອີກໜຶ່ງ ສະບັບ ເກັບໄວ້ສຳເນົາ ນຳອົງການປະຕິບັດວຽກງານກວດກາການຄ້າທີ່ກ່ຽວຂ້ອງ.

ໃນກໍລະນີທີ່ບໍ່ພົບເຫັນຜູ້ຖືກກວດກາ, ເຈົ້າໜ້າທີ່ກວດກາການຄ້າ ຕ້ອງຕິດປະກາດແຈ້ງການພາຍໃນເວລາ ຊາວສີ່ ຊົ່ວໂມງ ພາຍຫຼັງທີ່ສຳເລັດການກວດກາ ເພື່ອໃຫ້ເຈົ້າຂອງສິນຄ້າ, ເຄື່ອງຂອງ ເຂົ້າມາຕິດຕາມ ແລະ ພົວພັນເອົາສິນຄ້າ, ເຄື່ອງຂອງນັ້ນຄືນ. ປະກາດແຈ້ງການດັ່ງກ່າວ ຕ້ອງຕິດໄວ້ຢູ່ຕໍ່ໜ້າສຳນັກງານຂອງອົງການປະຕິບັດວຽກງານກວດກາການຄ້າ ແລະຕາມສະຖານທີ່ສາທາລະນະ. ຜູ້ເປັນເຈົ້າຂອງ ຕ້ອງມາພົວພັນເອົາສິນຄ້າ, ເຄື່ອງຂອງນັ້ນ ພາຍໃນເວລາ ຊາວເອັດວັນ ນັບແຕ່ວັນຕິດປະກາດ ເປັນຕົ້ນໄປ ຖ້າກາຍເວລາດັ່ງກ່າວແລ້ວ ສິນຄ້າ, ເຄື່ອງຂອງນັ້ນ ຈະຕົກເປັນຂອງລັດ.

## ມາດຕາ 14. ການກວດກາສິນຄ້າເກືອດຫ້າມ

ການກວດກາສິນຄ້າ, ເຄື່ອງຂອງທີ່ເກືອດຫ້າມ ແມ່ນການກວດກາສິນຄ້າ ຫ້າມນຳເຂົ້າ, ສົ່ງອອກ, ຜະລິດ ແລະຈຳໜ່າຍ ຢູ່ໃນ ສປປ ລາວ ເຊັ່ນ: ຢາເສບຕິດ, ລະເບີດ ຫລືອາວຸດເສິກ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

ເມື່ອເຈົ້າໜ້າທີ່ກວດກາການຄ້າ ມີແຫຼ່ງຂ່າວທີ່ໜ້າເຊື່ອຖືໄດ້ ຫຼືມີຫຼັກຖານສົງໄສວ່າມີການກະທຳຜິດ ທີ່ກ່ຽວກັບສິນຄ້າເກືອດຫ້າມ ໃຫ້ແຈ້ງເຈົ້າໜ້າທີ່ຕຳຫຼວດທັນທີ ເພື່ອດຳເນີນການກວດກາ.

ໃນກໍລະນີພົບເຫັນການກະທຳຜິດເຊິ່ງໜ້າ ແລະຮີບດ່ວນ ກ່ຽວກັບສິນຄ້າເກືອດຫ້າມ ໃຫ້ເຈົ້າໜ້າທີ່ກວດກາການຄ້າກັກຕົວ ຫຼືຈັບຕົວຜູ້ກະທຳຜິດ ພ້ອມທັງຍຶດສິນຄ້າ, ເຄື່ອງຂອງ, ພາຫະນະຂົນສົ່ງ ແລະເອກະສານທີ່ກ່ຽວຂ້ອງກັບການກະທຳຜິດໄວ້ຊົ່ວຄາວ ແລະໃນເວລາດຽວກັນນັ້ນ ກໍຕ້ອງແຈ້ງ ແລະມອບໃຫ້ເຈົ້າໜ້າທີ່ຕຳຫຼວດ ທີ່ຮັບຜິດຊອບໃນເຂດ ນັ້ນ ທັນທີ ເພື່ອດຳເນີນການກວດກາ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

ການກັກຕົວ ຫຼືຈັບຕົວ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເຂັ້ມງວດ.

## ມາດຕາ 15. ການໃຫ້ຄວາມຮ່ວມມື

ໃນເວລາປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ກວດກາການຄ້າ ພະນັກງານ, ທະຫານ, ຕຳຫຼວດ ແລະປະຊາຊົນ ມີພັນທະໃຫ້ການຮ່ວມມື, ຊ່ວຍເຫຼືອແກ່ເຈົ້າໜ້າທີ່ກວດກາການຄ້າໃນການປະຕິບັດໜ້າທີ່ ເປັນຕົ້ນ ການຕິດຕາມ, ການຍຶດ ຫຼືອາຍັດ ສິນຄ້າ, ເຄື່ອງຂອງ, ພາຫະນະ ທີ່ລະເມີດລະບຽບກົດໝາຍ ເມື່ອມີການຮ້ອງຂໍ.

## ໝວດທີ 3
## ການພິຈາລະນາຜົນການກວດກາການຄ້າ

**ມາດຕາ 16. ການລາຍງານ ແລະການພິຈາລະນາຜົນການກວດກາ**

ພາຍຫຼັງທີ່ສຳເລັດການກວດກາແລ້ວ ເຈົ້າໜ້າທີ່ກວດກາການຄ້າ ຕ້ອງເຮັດບົດລາຍງານຄັດຕິດກັບບົດບັນທຶກການກວດກາ ໃຫ້ຜູ້ທີ່ມີສິດມອບໝາຍ ຫຼືຜູ້ທີ່ແຕ່ງຕັ້ງ ພາຍໃນເວລາ ສາມວັນ ລັດຖະການ ນັບແຕ່ວັນສິ້ນສຸດການກວດກາເປັນຕົ້ນໄປ ເພື່ອພິຈາລະນາ.

ຜູ້ມອບໝາຍ ຫຼືຜູ້ແຕ່ງຕັ້ງໃຫ້ກວດກາ ຕ້ອງພິຈາລະນາ ແລະມີຄຳເຫັນ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບບົດລາຍງານຜົນຂອງການກວດກາການຄ້າເປັນຕົ້ນໄປ ແລະຕ້ອງແຈ້ງຜົນຂອງການພິຈາລະນາເປັນລາຍລັກອັກສອນ ໃຫ້ຜູ້ຖືກກວດກາຊາບ ພາຍໃນເວລາ ສາມວັນ ລັດຖະການ ນັບແຕ່ວັນທີ່ມີຄຳເຫັນເປັນຕົ້ນໄປ ຊຶ່ງຄຳເຫັນດັ່ງກ່າວປະກອບມີ ສອງ ລັກສະນະ ດັ່ງນີ້:

1. ແກ້ໄຂ ແລະຍົກເລີກການກວດກາ;
2. ສືບຕໍ່ການແກ້ໄຂ.

**ມາດຕາ 17. ການແກ້ໄຂ ແລະການຍົກເລີກການກວດກາ**

ການລະເມີດລະບຽບກົດໝາຍກ່ຽວກັບການຄຸ້ມຄອງການຄ້າ ແລະການຄ້າສິນຄ້ານອກລະບົບ ທີ່ອີງການປະຕິບັດວຽກງານກວດກາການຄ້າ ສາມາດແກ້ໄຂ ແລະຍົກເລີກການກວດກາການຄ້າໄດ້ ແມ່ນການລະເມີດທີ່ລະບຽບກົດໝາຍກຳນົດໃຫ້ແກ້ໄຂດ້ວຍມາດຕະການທາງບໍລິຫານ ຫລືການສົມຍອມຄະດີ.

ກ່ອນທີ່ຈະຍົກເລີກການກວດກາ ຜູ້ທີ່ລະເມີດລະບຽບກົດໝາຍກ່ຽວກັບການຄຸ້ມຄອງການຄ້າ ແລະການຄ້າສິນຄ້ານອກລະບົບ ຕ້ອງຈ່າຍຄ່າປັບໃໝ ຫຼືຄ່າທຳນຽມຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງເສຍກ່ອນ ແລະການຊຳລະດັ່ງກ່າວ ຕ້ອງປະຕິບັດໃຫ້ຄົບຖ້ວນພາຍໃນເວລາ ສິບວັນ ລັດຖະການ.

**ມາດຕາ 18. ການສົມຍອມ**

ໃນກໍລະນີຜູ້ລະເມີດລະບຽບກົດໝາຍກ່ຽວກັບການຄຸ້ມຄອງການຄ້າ ແລະການຄ້າສິນຄ້ານອກລະບົບ ຫາກສົມຍອມ ແລະໄດ້ຈ່າຍຄ່າປັບໃໝ ແລະຄ່າທຳນຽມຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງແລ້ວ ອີງການປະຕິບັດວຽກງານກວດກາການຄ້າ ຫຼືຄະນະຮັບຜິດຊອບແກ້ໄຂ ມີສິດຕົກລົງແກ້ໄຂ ແລະຍົກເລີກການກວດກາ ພ້ອມທັງສົ່ງສິນຄ້າ, ເຄື່ອງຂອງທີ່ຍຶດ ຫຼືອາຍັດມານັ້ນ ຄືນໃຫ້ແກ່ຜູ້ເປັນເຈົ້າຂອງ, ຍົກເວັ້ນສິນຄ້າ, ເຄື່ອງຂອງ ຊຶ່ງກ່ຽວຂ້ອງກັບການກະທຳຜິດ ທີ່ບໍ່ສາມາດໃຫ້ສົມຍອມໄດ້.

**ມາດຕາ 19. ການສືບຕໍ່ການແກ້ໄຂ**

ການລະເມີດລະບຽບກົດໝາຍກ່ຽວກັບການຄຸ້ມຄອງການຄ້າ ແລະການຄ້າສິນຄ້ານອກລະບົບ ທີ່ບໍ່ສາ

ມາດແກ້ໄຂໄດ້ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງດຳລັດສະບັບນີ້ ແມ່ນໃຫ້ແຕ່ງຕັ້ງຄະນະສະເພາະກິດຮັບຜິດຊອບແກ້ໄຂ.

ຄະນະສະເພາະກິດຮັບຜິດຊອບແກ້ໄຂ ຢ່າງໜ້ອຍຕ້ອງປະກອບດ້ວຍພາກສ່ວນຕ່າງໆ ດັ່ງນີ້:

- ອົງການປະຕິບັດວຽກງານກວດກາການຄ້າ;
- ຕຳຫຼວດເສດຖະກິດ;
- ອົງການໄອຍະການປະຊາຊົນ; ແລະ
- ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

## ໝວດທີ 4
## ອົງການປະຕິບັດວຽກງານກວດກາການຄ້າ, ພະນັກງານ ກວດກາການຄ້າ ແລະເຈົ້າໜ້າທີ່ກວດກາການຄ້າ

### ມາດຕາ 20. ອົງການປະຕິບັດວຽກງານກວດກາການຄ້າ

ອົງການປະຕິບັດວຽກງານກວດກາການຄ້າ ແມ່ນການຈັດຕັ້ງໜຶ່ງ ທີ່ຂຶ້ນກັບຂະແໜງອຸດສາຫະກຳ ແລະການຄ້າ ຊຶ່ງປະກອບມີ ສາມຂັ້ນ ດັ່ງນີ້:

- ຂັ້ນສູນກາງ ແມ່ນກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍພະແນກກວດກາການຄ້າ ເປັນຜູ້ຊ່ວຍວຽກ;
- ຂັ້ນແຂວງ ແມ່ນຂະແໜງການຄ້າພາຍໃນ ພະແນກອຸດສາຫະກຳ ແລະ ການຄ້າ ໂດຍໜ່ວຍງານກວດກາການຄ້າ ເປັນຜູ້ຊ່ວຍວຽກ;
- ຂັ້ນເມືອງ ແມ່ນຫ້ອງການອຸດສາຫະກຳ ແລະການຄ້າເມືອງ, ເທດສະບານ ໂດຍຈຸງານ ຫຼືພະນັກ ງານທີ່ເຮັດໜ້າທີ່ຄຸ້ມຄອງການຄ້າພາຍໃນ ເປັນຜູ້ຊ່ວຍວຽກ.

ພະແນກກວດກາການຄ້າ, ໜ່ວຍງານກວດກາການຄ້າ ແລະຈຸງານກວດກາການຄ້າ ມີພາລະບົດບາດເປັນຜູ້ຊ່ວຍວຽກອົງການປະຕິບັດວຽກງານກວດກາການຄ້າດ້ານລະບຽບກົດໝາຍ ແລະດ້ານວິຊາການກ່ຽວກັບການກວດກາການຄ້າ.

ມອບໃຫ້ກະຊວງອຸດສາຫະກຳ ແລະການຄ້າ ເປັນຜູ້ອອກລະບຽບການ ກຳນົດສິດ ແລະໜ້າທີ່ລະອຽດຂອງພາກສ່ວນຊ່ວຍວຽກອົງການປະຕິບັດວຽກງານກວດກາການຄ້າດັ່ງກ່າວ.

### ມາດຕາ 21. ພະນັກງານກວດກາການຄ້າ

ພະນັກງານກວດກາການຄ້າ ປະກອບດ້ວຍ:

- ຫົວໜ້າອົງການປະຕິບັດວຽກງານກວດກາການຄ້າ ຫຼືຮອງຫົວໜ້າ ຜູ້ທີ່ໄດ້ຮັບມອບໝາຍ;

- ລັດຖະກອນ ທີ່ຖືກປັບຈຸ ສັບຊ້ອນຢູ່ໃນພະແນກກວດກາການຄ້າ, ກົມການຄ້າພາຍໃນ ກະຊວງອຸດສາຫະກຳ ແລະການຄ້າ ຫຼືໜ່ວຍງານກວດກາການຄ້າ, ຂະແໜງການຄ້າພາຍໃນ ພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນ ຫຼືຈຸງານກວດກາການຄ້າ ຫ້ອງການອຸດສາຫະກຳ ແລະການຄ້າເມືອງ, ເທດສະບານ.

ຈຳນວນລັດຖະກອນ ທີ່ເຮັດໜ້າທີ່ເປັນພະນັກງານກວດກາການຄ້າ ຕ້ອງມີຈຳນວນເທົ່າກັບຈຳນວນຕຳແໜ່ງງານ ທີ່ມີຄວາມຈຳເປັນເທົ່ານັ້ນ.

ພະນັກງານກວດກາການຄ້າ ຕ້ອງມີວິຊາສະເພາະດ້ານກົດໝາຍ ໂດຍສະເພາະກົດໝາຍກ່ຽວກັບຂະແໜງການເສດຖະກິດ ຫຼືຢ່າງໜ້ອຍ ຕ້ອງມີໃບຢັ້ງຢືນຈົບຫຼັກສູດຝຶກອົບຮົມກ່ຽວກັບວຽກງານກວດກາການຄ້າ ຖ້າຫາກແມ່ນວິຊາທາງດ້ານເສດຖະກິດອື່ນ.

ມອບໃຫ້ກະຊວງອຸດສາຫະກຳ ແລະການຄ້າ ເປັນຜູ້ກຳນົດຈຳນວນພະນັກງານກວດກາການຄ້າດັ່ງກ່າວ.

## ມາດຕາ 22. ເຈົ້າໜ້າທີ່ກວດກາການຄ້າ

ເຈົ້າໜ້າທີ່ກວດກາການຄ້າ ແມ່ນລັດຖະກອນຂອງອົງການປະຕິບັດວຽກງານກວດກາການຄ້າ ໃນແຕ່ລະຂັ້ນ ທີ່ຖືກແຕ່ງຕັ້ງໃຫ້ດຳເນີນການກວດກາການຄ້າໃດໜຶ່ງ.

ໃນກໍລະນີຈຳເປັນ, ລັດຖະກອນພາກສ່ວນອື່ນຂອງຂະແໜງການອຸດສາຫະກຳ ແລະການຄ້າ ກໍສາມາດຖືກແຕ່ງຕັ້ງໃຫ້ເປັນເຈົ້າໜ້າທີ່ກວດກາການຄ້າໄດ້.

ໄລຍະເວລາສຳລັບການເປັນເຈົ້າໜ້າທີ່ກວດກາການຄ້າ ແມ່ນຂຶ້ນກັບກໍລະນີ ຫຼືເປົ້າໝາຍຂອງການກວດກາແຕ່ລະຄັ້ງ ແຕ່ຕ້ອງກຳນົດໄວ້ໃນຂໍ້ຕົກລົງແຕ່ງຕັ້ງທຸກຄັ້ງ.

ການກວດກາແຕ່ລະຄັ້ງຈະສິ້ນສຸດ ເມື່ອສຳເລັດໜ້າທີ່ ຫຼືໝົດກຳນົດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງແຕ່ງຕັ້ງ ແລະເຈົ້າໜ້າທີ່ກວດກາດັ່ງກ່າວໄດ້ລາຍງານ, ມອບບັດເຈົ້າໜ້າທີ່ກວດກາການຄ້າ ແລະເອກະສານທັງໝົດທີ່ກ່ຽວຂ້ອງກັບການກວດການັ້ນ ໃຫ້ພະແນກກວດກາການຄ້າ ສຳລັບຂັ້ນສູນກາງ, ໃຫ້ໜ່ວຍງານກວດກາການຄ້າ ສຳລັບຂັ້ນແຂວງ ແລະໃຫ້ຈຸງານກວດກາການຄ້າ ສຳລັບຂັ້ນເມືອງ.

ການສິ້ນສຸດການກວດກາແຕ່ລະຄັ້ງ ຈະຖືວ່າການເປັນເຈົ້າໜ້າທີ່ກວດກາການຄ້າ ຂອງຜູ້ທີ່ຖືກມອບໝາຍ ຫຼືແຕ່ງຕັ້ງນັ້ນໄດ້ສິ້ນສຸດ.

## ມາດຕາ 23. ເງື່ອນໄຂ ຂອງເຈົ້າໜ້າທີ່ກວດກາການຄ້າ

ເຈົ້າໜ້າທີ່ກວດກາການຄ້າ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຄວາມສາມາດ ຫຼືຮັບຜິດຊອບວຽກທີ່ພົວພັນກັບການກວດກາໃນແຕ່ລະຄັ້ງ;
2. ເປັນລັດຖະກອນສົມບູນຂອງອົງການປະຕິບັດວຽກງານກວດກາການຄ້າ ຫຼືລັດຖະກອນສົມບູນຂອງພາກສ່ວນອື່ນ ຂອງຂະແໜງອຸດສາຫະກຳ ແລະການຄ້າ ໃນກໍລະນີທີ່ຈຳເປັນ;
3. ບໍ່ເຄີຍຖືກລົງວິໄນ ຫຼືຖືກລົງໂທດໃນສະຖານສໍ້ໂກງ, ຍັກຍອກ ຫຼືສໍ້ລາດບັງຫຼວງ.

ມາດຕາ 24. **ໜ້າທີ່ ຂອງເຈົ້າໜ້າທີ່ກວດກາການຄ້າ**

ເຈົ້າໜ້າທີ່ກວດກາການຄ້າ ມີໜ້າທີ່ ດັ່ງນີ້:

1. ດຳເນີນການກວດກາການຄ້າ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ;

2. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານກວດກາຂອງຕົນ;

3. ເຮັດບົດລາຍງານ ແລະມອບເອກະສານທັງໝົດ ທີ່ກ່ຽວຂ້ອງກັບການກວດກາ ລວມທັງມອບບັດເຈົ້າໜ້າທີ່ກວດກາການຄ້າຄືນໃຫ້ຂັ້ນເທິງທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ວັກສີ່ ຂອງດຳລັດສະບັບນີ້;

4. ຂຶ້ນແຜນກວດກາ, ສະຫຼຸບ, ປະເມີນຜົນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ເພື່ອ ລາຍງານ ແລະຂໍທິດຊີ້ນຳຈາກຂັ້ນເທິງ;

5. ຮັກສາຄວາມລັບ ທີ່ກ່ຽວຂ້ອງກັບການກວດກາການຄ້າ;

6. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຫຼືຕາມການມອບໝາຍຂອງຂັ້ນເທິງ.

ມາດຕາ 25. **ສິດ ຂອງເຈົ້າໜ້າທີ່ກວດກາການຄ້າ**

ເຈົ້າໜ້າທີ່ກວດກາການຄ້າ ມີສິດ ດັ່ງນີ້:

1. ແຈ້ງເຕືອນຜູ້ທີ່ລະເມີດໃຫ້ຊຳລະຄ່າປັບໃໝ ແລະຄ່າພັນທະອື່ນ;

2. ຕັກເຕືອນ ແລະສຶກສາອົບຮົມຜູ້ທີ່ລະເມີດລະບຽບກົດໝາຍ ກ່ຽວກັບການຄຸ້ມຄອງການຄ້າ ແລະການຄ້າສິນຄ້ານອກລະບົບ;

3. ຍຶດ ຫຼືອາຍັດສິນຄ້າ, ເຄື່ອງຂອງ, ພາຫະນະຂົນສົ່ງ ຫຼືອຸປະກອນ ພ້ອມທັງເອກະສານທີ່ກ່ຽວຂ້ອງກັບການລະເມີດລະບຽບກົດໝາຍກ່ຽວກັບການຄຸ້ມຄອງການຄ້າ ແລະການຄ້າສິນຄ້ານອກລະບົບໄວ້ຊົ່ວຄາວເພື່ອເປັນຫຼັກຖານ;

4. ປັບໃໝຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງ;

5. ຖື ແລະນຳໃຊ້ອາວຸດ, ອຸປະກອນ ແລະພາຫະນະຕ່າງໆ ຕາມລະບຽບການສະເພາະ;

6. ເອົາຄຳໃຫ້ການເບື້ອງຕົ້ນ;

7. ກວດຄົ້ນເປົ້າໝາຍທີ່ກ່ຽວຂ້ອງກັບການກະທຳຜິດ;

8. ສັ່ງ ຫຼືນຳໃຊ້ມາດຕະການອັນເໝາະສົມ ເພື່ອໃຫ້ຜູ້ຂັບຂີ່ຍານພາຫະນະຢຸດ ເມື່ອມີແຫຼ່ງຂ່າວທີ່ໜ້າເຊື່ອຖື ຫຼືມີຄຳສັ່ງ ເພື່ອທຳການກວດຄົ້ນ;

9. ໄດ້ຮັບນະໂຍບາຍ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;

10. ນຳໃຊ້ສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

ການນຳໃຊ້ສິດຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ສາມ ແລະຂໍ້ເຈັດ ຂອງມາດຕານີ້ ຕ້ອງໄດ້ຮັບການເຫັນດີຈາກຂັ້ນເທິງທີ່ກ່ຽວຂ້ອງເສຍກ່ອນ ຍົກເວັ້ນກໍລະນີຈຳເປັນຮີບດ່ວນ.

## ໝວດທີ 5
## ງົບປະມານ, ເຄື່ອງແບບ, ກາໝາຍ ແລະບັດເຈົ້າໜ້າທີ່ກວດກາການຄ້າ

**ມາດຕາ 26. ງົບປະມານ**

ອົງການປະຕິບັດວຽກງານກວດກາການຄ້າ ມີງົບປະມານສະເພາະ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ. ງົບປະມານຂອງອົງການປະຕິບັດວຽກງານກວດກາການຄ້າຂັ້ນໃດ ແມ່ນຂຶ້ນກັບງົບປະມານຂອງອົງການຄຸ້ມຄອງວຽກງານກວດກາການຄ້າຂັ້ນນັ້ນ.

**ມາດຕາ 27. ເງິນທີ່ປັບໃໝ ຫຼືຂາຍເຄື່ອງທີ່ໄດ້ຮິບ**

ເງິນທີ່ໄດ້ຈາກການປັບໃໝ ຫຼືຂາຍເຄື່ອງທີ່ໄດ້ຮິບ ແມ່ນໃຫ້ໃຊ້ຈ່າຍເຂົ້າໃນການດຳເນີນການແກ້ໄຂຄະດີ, ຄ່າແຫຼ່ງຂ່າວ, ຄ່າຝາກສາງ, ຄ່າແບກຫາບ ຍົກຍໍ ແລະເຄື່ອນຍ້າຍຂອງກາງ ທີ່ຍຶດ ຫຼືຮິບ, ໃຫ້ບຸກຄົນທົ່ວໄປທີ່ໄດ້ປະກອບສ່ວນເຂົ້າໃນການດຳເນີນການກວດກາການຄ້າ ແລະຄ່າໃຊ້ຈ່າຍຕ່າງໆທີ່ຈຳເປັນ, ເຫຼືອນັ້ນ ແມ່ນມອບເຂົ້າງົບປະມານ.

ຄ່າໃຊ້ຈ່າຍດັ່ງກ່າວນັ້ນ ແມ່ນບໍ່ໃຫ້ເກີນ ຊາວສ່ວນຮ້ອຍ 20% ຂອງມູນຄ່າເງິນທີ່ໄດ້ຈາກການປັບໃໝ ຫຼືຂາຍເຄື່ອງທີ່ໄດ້ຮິບນັ້ນ.

**ມາດຕາ 28. ເຄື່ອງແບບ, ກາໝາຍ ແລະບັດເຈົ້າໜ້າທີ່ກວດກາການຄ້າ**

ພະນັກງານກວດກາການຄ້າມີເຄື່ອງແບບ, ກາໝາຍ ສະເພາະ ແລະບັດເຈົ້າໜ້າທີ່ກວດກາການຄ້າ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ.

ມອບໃຫ້ກະຊວງອຸດສາຫະກຳ ແລະການຄ້າ ເປັນຜູ້ກຳນົດລະອຽດກ່ຽວກັບ ເຄື່ອງແບບ, ກາໝາຍ ແລະບັດ ເຈົ້າໜ້າທີ່ກວດກາການຄ້າ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

**ມາດຕາ 29. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງໃດ ທີ່ມີຜົນງານດີເດັ່ນ ປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກງານກວດກາການຄ້າຈະໄດ້ຮັບການຕອບແທນ ໃນຮູບການຍ້ອງຍໍ ຫຼືນະໂຍບາຍອື່ນໆ ຕາມລະບຽບກົດໝາຍ.

ໃນກໍລະນີທີ່ເສຍອົງຄະ ຫຼືເສຍຊີວິດ ຈາກການປະຕິບັດໜ້າທີ່ ກໍຈະໄດ້ຮັບບຳເນັດ, ອຸດໜູນເບີ່ງແຍງ ແລະນະໂຍບາຍອື່ນ ຈາກການຈັດຕັ້ງທີ່ກ່ຽວຂ້ອງ ຂອງລັດຂັ້ນຕ່າງໆ ຕາມລະບຽບກົດໝາຍ.

ມອບໃຫ້ກະຊວງອຸດສາຫະກຳ ແລະການຄ້າ ອອກລະບຽບການລະອຽດ ໃນການຈັດຕັ້ງປະຕິບັດການຍ້ອງຍໍ ແລະນະໂຍບາຍ ຕາມແຕ່ລະກໍລະນີ.

ມາດຕາ 30. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ຫາກໄດ້ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການຕາມແຕ່ລະກໍລະນີເບົາ ຫຼືໜັກ.

ມາດຕາ 31. ມາດຕະການຕໍ່ການລະເມີດຂອງເຈົ້າໜ້າທີ່ກວດກາການຄ້າ ແລະພະນັກງານກວດກາການຄ້າ

ເຈົ້າໜ້າທີ່ກວດການການຄ້າ ແລະພະນັກງານກວດກາການຄ້າ ຫາກໄດ້ລະເມີດຕໍ່ການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ຍົກຍ້າຍໜ້າທີ່, ປົດຕຳແໜ່ງ ຫຼືໄລ່ອອກຈາກລັດຖະການ, ຮັບຜິດຊອບທາງແພ່ງ ຫຼືທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼືໜັກ ຕໍ່ພຶດຕິກຳ ດັ່ງນີ້ :

- ສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ ແລະໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ;
- ເອົາບັດເຈົ້າໜ້າທີ່ກວດກາການຄ້າ ຫຼືເຄື່ອງແບບໃຫ້ບຸກຄົນອື່ນນຳໃຊ້ ບໍ່ວ່າຈະໂດຍເຈດຕະນາ ຫຼືບໍ່ເຈດຕະນາ ກໍຕາມ;
- ເອົາອາວຸດທີ່ໄດ້ຮັບການມອບໝາຍ ໃຫ້ບຸກຄົນອື່ນນຳໃຊ້ ບໍ່ວ່າຈະໂດຍເຈດຕະນາ ຫຼືບໍ່ເຈດຕະນາ ກໍຕາມ;
- ບໍ່ປະຕິບັດຕາມຂັ້ນຕອນການກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງດຳລັດສະບັບນີ້;
- ນຸ່ງເຄື່ອງແບບໄປເຮັດວຽກໃນນາມສ່ວນຕົວ;
- ສັບປ່ຽນ, ທຳລາຍ ຫຼືເຮັດໃຫ້ຂອງກາງ ຫຼືຫຼັກຖານເສັຍຫາຍ.

ມາດຕາ 32. ມາດຕະການຕໍ່ການລະເມີດຂອງຜູ້ຖືກກວດກາ ແລະບຸກຄົນອື່ນ

ຜູ້ຖືກກວດກາ ແລະບຸກຄົນອື່ນ ຈະຖືກກ່າວເຕືອນ, ຮັບຜິດຊອບທາງແພ່ງ ຫຼືທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼືໜັກ ຕໍ່ພຶດຕິກຳ ດັ່ງນີ້ :

1. ປອມຕົວ ຫຼືແອບອ້າງເປັນເຈົ້າໜ້າທີ່ກວດກາການຄ້າ;
2. ບໍ່ໃຫ້ຄວາມຮ່ວມມື, ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ຂົ່ມຂູ່, ໃຊ້ຄວາມຫຍາບຄາຍ, ໃຊ້ຄວາມຮຸນແຮງ ຫຼືທຳຮ້າຍຮ່າງກາຍເຈົ້າໜ້າທີ່ກວດກາການຄ້າ;
3. ສັບປ່ຽນ, ທຳລາຍ ຫຼືເຮັດໃຫ້ຂອງກາງ ຫຼືຫຼັກຖານເສັຍຫາຍ.

ໃນກໍລະນີ ທີ່ຜູ້ລະເມີດ ຫາກບໍ່ຍອມຊຳລະຄ່າປັບໃໝ, ຄ່າທຳນຽມ ຫຼືຄ່າພັນທະອື່ນໆ ຕາມເວລາທີ່ໄດ້ກຳນົດໄວ້ແລ້ວ ຈະຖືກປະຕິບັດມາດຕະການ ດັ່ງນີ້ :

- ຈະຖືກຕັກເຕືອນ ສຳລັບການແຈ້ງເຕືອນຄັ້ງທີໜຶ່ງ;
- ຈະຖືກປັບໃໝເທົ່າຕົວຂອງມູນຄ່າການປັບໃໝ, ຄ່າທຳນຽມ ຫຼືມູນຄ່າພັນທະອື່ນໆ ສຳລັບການແຈ້ງເຕືອນຄັ້ງທີ ສອງ;

- ຈະຖືກປະຕິບັດມາດຕະການໃດໜຶ່ງ ເຊັ່ນ ຍຶດ, ອາຍັດສິນຄ້າ, ເຄື່ອງຂອງທີ່ກ່ຽວຂ້ອງ, ໂຈະການດຳເນີນທຸລະກິດຢ່າງໃດຢ່າງໜຶ່ງໄວ້ຊົ່ວຄາວ ຫຼືຖາວອນ ຕາມແຕ່ລະກໍລະນີ ສຳລັບການແຈ້ງເຕືອນຄັ້ງທີສາມ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

### ມາດຕາ 33. ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງອຸດສາຫະກຳ ແລະການຄ້າ ເປັນເຈົ້າການໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ປາກົດເປັນຈິງ ແລະມີປະສິດທິຜົນ.

ບັນດາກະຊວງ, ອົງການທຽບເທົ່າ ແລະອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

### ມາດຕາ 34. ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ .

ນາຍົກລັດຖະມົນຕີ

**ທອງສິງ ທຳມະວົງ**